# ການສ້າງວັງສະຫງວນປາທຳມະຊາດ

## ໃນແຂວງຫຼວງພະບາງ

*ວັງສະຫງວນ ຕາມສາຍນ້ຳລຳຫ້ວຍ ຢູ່ ແຂວງຫລວງພະບາງ ແມ່ນໄດ້ກາຍເປັນຍຸດທະສາດທີ່ໄດ້ຮັບຜົນດີ ໂດຍການປະກອບສ່ວນຂອງຊຸມຊົນໃນທ້ອງຖິ່ນ ເພື່ອຮັບປະກັນໃຫ້ປະຊາກອນຂອງປາຊະນິດພັນຕ່າງໆ ເພື່ອໃຫ້ມີຄວາມອຸດົມສົມບູນຫລາຍຂຶ້ນ. ວັງສະຫງວນ ຍັງເປັນພື້ນຖານໃນການຕອບສະໜອງທາງ ດ້ານສະບຽງອາຫານໃຫ້ປະຊາຊົນໄດ້ບໍລິໂພກຊີ້ນປາຫລາຍຂຶ້ນ ແລະ ມີລາຍຮັບຫລາຍຂຶ້ນຈາກການຂາຍປາ. ວັງສະຫງວນ ຍັງເປັນການຊ່ວຍການອານຸຮັກແຄມຕາຝັ່ງນ້ຳ ລວມທັງ ການທ່ອງທ່ຽວ.*



### ນິເວດວິທະຍາ ແລະ ການຄຸ້ມຄອງ:

ປາແຕ່ລະຊະນິດແມ່ນມີແຫຼ່ງທີ່ຢູ່ອາໄສສະເພາະເຈາະຈົງເພື່ອໃຫ້ເໝາະສົມກັບຮູບຮ່າງ ແລະ ການດຳລົງຊີວິດ. ໂດຍພື້ນຖານແມ່ນອີງໃສ່ອາຫານ, ການປ້ອງກັນຕົວຈາກນັກລ່າ ແລະ ການປ່ຽນແປງຂອງສະພາບແວດລ້ອມ. ວັງສະຫງວນແມ່ນໄດ້ສ້າງຂຶ້ນຕາມສາຍນ້ຳທີ່ມີຄວາມອຸດົມສົມບູນເພື່ອເປັນແຫຼ່ງທີ່ຢູ່ອາໄສຂອງປາຫຼາກຫຼາຍຊະນິດ, ລວມໄປເຖິງອາຫານ, ທີ່ລີ້ບຫຼີກນັກລ່າ ແລະ ການປັບຕົວເຂົ້າກັບປັດໄຈຕ່າງໆທາງດ້ານສິ່ງແວດລ້ອມເຊັ່ນ: ອຸນຫະພູມ, ແສງ, ຄວາມຂຸ້ນ ແລະ ພິເອສຂອງນ້ຳ. ການຄັດເລືອກວັງສະຫງວນຄວນມີປັດໄຈຕ່າງໆທີ່ກ່າວມານັ້ນຢ່າງເໝາະສົມ.



### ການຂະຫຍາຍ ແລະ ຜົນກະທົບ:

- ໄດ້ສ້າງວັງສະຫງວນ 43 ແຫ່ງ ຢູ່ຕາມ 26 ສາຍນ້ຳ ແລະ ຫ້ວຍນ້ຳຕ່າງໆ ໃນ 121 ບ້ານ ຂອງ 9 ເມືອງ.
- ວັງສະຫງວນ ເປັນແຫຼ່ງສະໜອງຊີ້ນປາໃຫ້ແກ່ປະຊາຊົນຫລາຍກ່ວາ 61,000 ຄົນ, ຈຳນວນ 13,000 ຄອບຄົວ ໃນເຂດຊົນນະບົດ.
- ບາງຊຸມຊົນວັງສະຫງວນ ໄດ້ຂະຫຍາຍຕົວ ແລະ ຕອບສະໜອງ 10,000 ກິໂລຕໍ່ໜຶ່ງປີ ແລະ ມີຫລາກຫລາຍຊະນິດພັນຫລາຍຂຶ້ນ.
- ບາງຄອບຄົວໃນເຂດອ້ອມຂ້າງວັງສະຫງວນສາມາດຫາປາຂາຍໄດ້ເງິນ 900,000 ກີບຕໍ່ໜຶ່ງປີ.



### ໂອກາດ:

- ຂະຫຍາຍຈຳນວນວັງສະຫງວນ ເພີ້ມຕື່ມຕາມສາຍນ້ຳລຳຫ້ວຍພາຍໃນແຂວງ.
- ຂະຫຍາຍຂອບເຂດວັງສະຫງວນອອກ ໃຫ້ກວມເອົາລະບົບນິເວດຕາມແຄມນ້ຳທີ່ຢູ່ຕິດພັນກັບສາຍນ້ຳ.
- ສ້າງສິ່ງອຳນວຍຄວາມສະດວກ ດ້ານການທ່ອງທ່ຽວໃຫ້ແກ່ ວັງສະຫງວນ ທີ່ເປັນບູລິມະສິດ ເພື່ອເພີ້ມລາຍຮັບໃຫ້ແກ່ຊຸມຊົນຈາກການຂາຍອາຫານຄົນ, ອາຫານປາ, ພືດຜັກ ແລະ ເຄື່ອງຫັດຖະກຳທ້ອງຖິ່ນ.
- ນຳໃຊ້ ວັງສະຫງວນ ເປັນໂຕກະຕຸ້ນທີ່ແຂງແຮງ ເພື່ອຫລຸດຜ່ອນການນຳໃຊ້ຢາເຄມີປາບສັດຕູພືດ ແລະ ຢາຂ້າຫຍ້າ ໃນເຂດດິນກະສິກຳເນີນສູງ.
- ຍົກລະດັບທັດສະນະວິໃສ ແລະ ຄວາມຮັບຮູ້ ກ່ຽວກັບ ວັງສະຫງວນ ໂດຍວິທີການແຈກຢາຍແຜ່ນພັບ, ໂປດສະເຕີ ແລະ ຕິດປ້າຍໃຫ້ຢູ່ໃກ້ກັບເຂດບໍລິເວນພື້ນທີ່ວັງສະຫງວນ.
- ນຳເອົາກິດຈະກຳວັງສະຫງວນ ປະກອບເຂົ້າໃນໂຄງການໂພຊະນາການ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)

# Fish Conservations Zones (FCZ)

in Luang Prabang Province

*Fish Conservations Zones on rivers and streams in Luang Prabang province have been a successful strategy employed by local communities to ensure abundant and diverse fish populations. FCZs lead to substantial increases in local fish consumption and income from fish sales. FCZs are often supported by riparian conservation efforts and tourism.*



## Ecology and managerment

Each fish species has very specific habitat requirements for their success. This is based on their needs for reproduction, migration, food and for protection from predators and other environmental risks. Fish Conservation Zones are established in areas of rivers which include a diversity of habitats that needed for the widest possible diversity of fish species. Areas for spawning, access and natural production of food, protection from predators for both immature and mature fish and other environmental factors such as heat, cold and direct sunlight are all important in selecting FCZs.



## Scale and Impact

• 43 FCZs established in 26 rivers and streams in 9 Districts and 121 villages.
• FCZ providing greater fisheries resources to more than 61,000 rural people from 13,000 households.
• Some FCZ communities are catching more than 10,000 kgs of a diversity of fish species per year.
• Families in some FCZ receive increased income from fish sales up to 900,000 Kip per year.



## Opportunities

• Expand the number of FCZs in the provincial streams.
• Extend the FCZs into riparian ecosystems that are connected to FCZ streams.
• Development of tourist facilities at priority FCZs to increase revenue for communities linked to sales of food, locally grown fish feed, agricultural products and local handicrafts.
• Use the FCZ as a strong incentive for farmers to reduce the use of pesticides in upland agriculture.
• Increase the visibility and awareness of FCZs by means of distributing brochures, posters and placing of signs adjacent to FCZ areas.
• Incorporate FCZ activities into nutrition focused projects.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)